# ການສ້າງສິນຄ້າ 1 ເມືອງ 1 ຜະລິດຕະພັນ (ODOP)

# ສະເໜີໃນກອງປະຊຸມປຶກສາຫາລືກ່ຽວກັບນ້ຳເຜີ້ງຂອງລາວເປັນຜະລິດຕະພັນເອກະລັກຂອງທ້ອງຖິ່ນ ຕິດພັນກັບການອະນຸລັກປ່າໄມ້ ແລະ ການພັດທະນາທ້ອງຖິ່ນ

## ຄັ້ງວັນທີ 22-24/5/2018

ສະເໜີໂດຍ: ທ. ຊາຍ ວິໄລສຸກ ຮອງຫົວໜ້າຂະແໜງສົ່ງເສີມ SME ແລະ ການຄ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ

## I. ຄວາມໝາຍຂອງສິນຄ້າ 1 ເມືອງ 1 ຜະລິດຕະພັນ ຫຼື ODOP

ໝາຍເຖິງຜະລິດຕະພັນທີ່ນຳໃຊ້ສີມືແຮງງານ, ພູມປັນຍາ, ຫົວຄິດປະດິດສ້າງ ແລະ ຊັບພະຍາກອນພາຍໃນທ້ອງຖິ່ນ ເປັນເອກະລັກຂອງທ້ອງຖິ່ນ (ເມືອງ, ບ້ານ) ນັ້ນໆ ແລະ ອາດເປັນໄດ້ທັງຕົວສິນຄ້າສາມາດຈັບບາຍໄດ້(ຜະລິດຕະພັນ, ສິນຄ້າ) ແລະ ຮູບແບບການບໍລິການທີ່ບໍ່ສາມາດຈັບບາຍໄດ້ (ວັດທະນະທຳ, ສະຖານທີ່ທ່ອງທ່ຽວ, ວິຖີຊີວິດ, ປະເພນີແບບແຜນການດຳລົງຊີວິດ) ມີມູນເຊື້ອ ແລະ ເປັນມໍລະດົກຕົກທອດກັນມາ.

# II. ການສ້າງສິນຄ້າໂອດອບຂອງແຂວງ:

- ທົ່ວແຂວງມີສິນຄ້າ ໂອດອບ 5 ລາຍການ ຄື:
- ຄັນຍູເຈ້ຍ ເມືອງ ພູກູດ ຈັດພິທີມອບຮັບໃນວັນທີ 12/11/2014 ຢູ່ທີ່ວິສາຫະກິດສວນພູຄຳ

•ເສັ້ນເຝີ ບ້ານ ນາອູ່ ເມືອງຄູນ
•ຫັດຖະກຳຜ້າໄໝມ້ອນ ບ້ານ ຊຽງກ່ຽວ ເມືອງຄຳ
•ແກະສະຫລັກໄມ້ ນາວັງ ບ້ານ ໂພນມີໄຊ ເມືອງແປກ
•ຜະລິດຕະພັນເຕົາໂລ້ ບ້ານທຳກາງ ເມືອງຜາໄຊ

ຈັດພິທີມອບຮັບໃນວັນທີ 23 ທັນວາ 2015
ຢູ່ທີ່ ພະແນກ ອຄ ແຂວງ


ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
ພິທີມອບປ້າຍ
ກາໝາຍສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ (ODOP) ແຫ່ງຊາດ


ພິທີມອບປ້າຍ
ກາໝາຍສິນຄ້າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ (ODOP) ແຫ່ງຊາດ
ທີ່ ແຂວງຊຽງຂວາງ, ວັນທີ 23 ທັນວາ 2015.
ODOP
ONE DISTRICT ONE PRODUCT
ເມືອງຄູນ
ແຂວງ ຊຽງຂວາງ
ສິນຄ້າໜຶ່ງເມືອງ ໜຶ່ງຜະລິດຕະພັນ ແຫ່ງຊາດ
ແຂວງ ຊຽງຂວາງ

- **ເຊິ່ງການຈັດຕັ້ງປະຕິບັດວຽກງານໂອດອບຂອງແຂວງພວກເຮົາແມ່ນໄດ້ອີງໃສ່:**
- ບົດແນະນໍາກ່ຽວກັບການສົ່ງເສີມການຜະລິດສິນຄ້າຂອງກົມສົ່ງເສີມ ແລະ ພັດທະນາສິນຄ້າ ສະບັບເລກທີ 3558/ສພຄ ລົງວັນທີ 25/11/2012
- ເງື່ອນໄຂ ແລະ ຂັ້ນຕອນໃນການຄັດເລືອກສິນຄ້າ ໜຶ່ງເມືອງໜຶ່ງຜະລິດຕະພັນຂອງກົມສົ່ງເສີມ ແລະ ພັດທະນາສິນຄ້າ ສະບັບເລກທີ 3559/ສພຄ ລົງວັນທີ 25/11/2012
- ອີງຕາມ ລະບຽບການນໍາໃຊ້ກາໝາຍສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນແຫ່ງຊາດ ຂອງລັດຖະມົນຕີວ່າການກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 2433/ອຄ.ສພຄ ລົງວັນທີ 26/11/2012
- ແລະ ນິຕິກໍາອື່ນໆທີ່ກ່ຽວຂ້ອງ.

# III. ເງື່ອນໄຂ ແລະ ຂັ້ນຕອນໃນການຄັດເລືອກສິນຄ້າ 1 ເມືອງ 1 ຜະລິດຕະພັນ:

## 1. ຫຼັກການລວມ:

- ຜະລິດຕະພັນທີ່ຈະຄັດເລືອກເປັນສິນຄ້າ ໂອດອບນັ້ນ ຕ້ອງເປັນສິນຄ້າ ຫຼື ຜະລິດຕະພັນ ທີ່ຜະລິດໂດຍຊຸມຊົນ, ຫຼາຍຄອບຄົວ, ກຸ່ມຜະລິດ, ສະຫະ ກອນ ຫຼື ວິສາຫະກິດຂອງຊຸມຊົນ.
- ສິນຄ້າຫຼືຜະລິດຕະພັນນັ້ນ ຈະຕ້ອງບໍ່ນອນໃນເງື່ອນໄຂລຸ່ມນີ້:

1. ວັດຖຸດິບນ□າເຂົ້າຈາກຕ່າງປະເທດ 100%
2. ວັດຖຸດິບທີ່ນໍາມາຜະລິດນັ້ນເປັນຂອງຜິດກົດໝາຍ ຫຼື ຫຼີບຫຼີກການເສຍພາສີ-ອາກອນ
3. ເປັນສິນຄ້າປອມແປງ, ລອກຮຽນແບບ ຫຼື ລະເມີດຊັບສິນທາງປັນຍາ

1. ເປັນສິນຄ້າ ຫຼື ຜະລິດຕະພັນທີ່ເປັນອັນຕະລາຍຕໍ່ສຸຂະພາບ/ທຳລາຍສະພາບແວດລ້ອມ

2. ເປັນສິນຄ້າທີ່ບໍ່ມີຄວາມຍືນຍົງ/ບໍ່ມີອານາຄົດ/ພຽງແຕ່ຜະລິດ ເພື່ອຂາຍໃນງານເທດສະການໃດໜຶ່ງ ໃນໄລຍະສັ້ນໆ

3. ເປັນສິນຄ້າທີ່ຜະລິດຮ່ວມກັບຄົນຕ່າງປະເທດ

4. ວັດຖຸດິບທີ່ນຳມາໃຊ້ບໍ່ສາມາດໝູນວຽນໄດ້, ປົກແຫ້ງ ບໍ່ສາມາດປູກທົດແທນ ຫຼື ເກີດຂຶ້ນຕາມທຳມະຊາດໄດ້.

## 2. ເງື່ອນໄຂ ແລະ ມາດຖານ ຂອງສິນຄ້າໂອດອບ

- **2.1 ສ□າລັບຕົວສິນຄ້າ:**

- ຕ້ອງນຳໃຊ້ວັດຖຸດິບຢູ່ພາຍໃນທ້ອງຖິ່ນ, ເມືອງ/ບ້ານ 80% ຂຶ້ນໄປ ນອກຈາກນັ້ນແມ່ນຂຶ້ນກັບອັດຕາສ່ວນລຸ່ມນີ້:

+ ນຳໃຊ້ວັດຖຸດິບຈາກເມືອງອື່ນທີ່ຢູ່ມໍ່ກັນ ຫຼື ແຂວງອື່ນ (ອັດຕາສ່ວນແມ່ນຂຶ້ນກັບແຕ່ລະປະເພດສິນຄ້າ)

+ ນຳໃຊ້ວັດຖຸດິບ/ວັດສະດຸ/ພາຊະນະຫຸ້ມຫໍ່ຈາກຕ່າງປະເທດ (ອັດຕາສ່ວນແມ່ນຂຶ້ນກັບແຕ່ລະປະເພດສິນຄ້າ).

**2.2 ພູມປັນຍາທ້ອງຖິ່ນ:**

ສິນຄ້າ ຫຼື ຜະລິດຕະພັນນັ້ນຕ້ອງນອນໃນ 1 ເງື່ອນໄຂລຸ່ມນີ້

- ເປັນພູມປັນຍາຈາກທ້ອງຖິ່ນເອງ (ເມືອງ, ບ້ານ)
- ເປັນພູມປັນຍາເກີດຈາກທ້ອງຖິ່ນອື່ນ ແລະ ເອົາມາພັດທະນາ ຍ້ອນວ່າມີວັດຖຸດິບ ແລະ ມີຕະຫຼາດຈຳໜ່າຍ ຫຼື ຍ້ອນການຍົກຍ້າຍຖິ່ນຖານ
- ເປັນຫົວຄິດປະດິດສ້າງຂຶ້ນມາໃໝ່

## 2.3 ຂະບວນການຜະລິດສິນຄ້າ:

- ດຳເນີນຕາມຂັ້ນຕອນຜະລິດ ແລະ ປຸງແຕ່ງຕ່າງໆເຊັ່ນ: ປ່ຽນຈາກຮູບຮ່າງຂອງວັດຖຸເດີມເປັນຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ອອກແບບການຫຸ້ມຫໍ່ຈົນກາຍເປັນຜະລິດຕະພັນສຳເລັດຮູບ.
- ສະຖານທີ່ຜະລິດ/ປຸງແຕ່ງ ຕ້ອງໄດ້ຜ່ານແບບແຜນ ແລະ ໄດ້ຖືກຮັບຮອງຈາກພາກສ່ວນກ່ຽວຂ້ອງເຊັ່ນ: ບໍ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ພາຫະນະ, ເຄື່ອງມືການຜະລິດ/ປຸງແຕ່ງ/ພາຊະນະ/ວັດສະດຸຫຸ້ມຫໍ່ ຕ້ອງຮັບປະກັນຄວາມປອດໄພຕໍ່ສຸຂະພາບຂອງຜູ້ຊົມໃຊ້ ແລະ ຜູ້ບໍລິໂພກ.

## 2.4 ຄຸນນະພາບສິນຄ້າ:

- ຖ້າຜະລິດຕະພັນ ຫຼື ສິນຄ້າໃດທີ່ເປັນ ສິນຄ້າປະເພດອາຫານ ຫຼື ບໍລິໂພກຕ້ອງໄດ້ຮັບການຢັ້ງຢືນອຍ **ຫຼື ອາຫານສະອາດ** ຈາກ**ອາຫານ ແລະ ຢາ.**

## 3. ຂັ້ນຕອນການຄັດເລືອກສິນຄ້າ 1 ເມືອງ 1 ຜະລິດຕະພັນ

1. ຜູ້ຜະລິດ ຕ້ອງຂຶ້ນບັນຊີລາຍການຜະລິດຕະພັນສິນຄ້າ ທີ່ຕົນຜະລິດໄດ້ ແລ້ວສະເໜີຕໍ່ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງບ່ອນທີ່ຕົນຢູ່.
2. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ ເຊື້ອເຊີນຄະນະກຳມະການຂັ້ນເມືອງມາຈັດລຽງບູລິມະສິດ ແລະ ຄັດເລືອກ
3. ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງສົ່ງເອກະສານບົດປະເມີນຜົນຂອງຄະນະກຳມະການຂັ້ນເມືອງສົ່ງໃຫ້ພະແນກອຸດສາ ຫະກຳ ແລະ ການຄ້າແຂວງ
4. ຄະນະກຳມະການຄັດເລືອກຂັ້ນແຂວງເປັນຜູ້ໃຈ້ແຍກຄວາມເປັນເອກະລັກ, ຄວາມໂດດເດັ່ນຂອງສິນຄ້າຢ່າງລະອຽດຂອງແຕ່ລະເມືອງແລ້ວມອບບັນຊີໃຫ້ພະແນກອຸດສາຫະກຳ ແລະ ການຄ້າແຂວງເພື່ອສະເໜີຂໍການໝາຍຈາກໜ່ວຍງານຄຸ້ມຄອງ (ກົມສົ່ງເສີມການຄ້າ ກະຊວງອຸດສາຫະກຳ ແລະ ການຄ້າ) ຕາມຈຳນວນທີ່ຕ້ອງການໃນແຕ່ລະໄລຍະ.

# ບັນຫາທີ່ພົບຄວາມຫຍຸ້ງຍາກໃນການສົ່ງເສີມການຜະລິດສິນຄ້າໂອດອບ ແລະ ວິທີແກ້ໄຂ:

| ບັນຫາ | ວິທີແກ້ໄຂ |
| --- | --- |
| **ການສົ່ງເສີມການຜະລິດສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຢູ່ບັນດາເມືອງ ຍັງມີໜ້ອຍ** | • ລົງໃກ້ສິດຕິດແທດກັບກຸ່ມການຜະລິດ-ອະທິບາຍໃຫ້ຜູ້ຜະລິດເຂົ້າໃຈກ່ຽວກັບນະໂຍບາຍສົ່ງເສີມການຜະລິດສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນໂດຍແມ່ນຫ້ອງການອຸດສາຫະກຳ ແລະ ການຄ້າບັນດາເມືອງ<br>• ພະແນກອຸດສາຫະກ□າ ແລະ ການຄ້າແຂວງ ຂະແໜງສົ່ງເສີມ SME ແລະ ການຄ້າ ເປັນຜູ້ຊີ້ນຳມະຫາພາກ |

| ບັນຫາ | ວິທີແກ້ໄຂ |
|---|---|
| ການຜະລິດສິນຄ້າທ່າແຮງຢູ່ພາຍໃນແຂວງສ່ວນຫຼາຍແມ່ນເປັນສິນຄ້າປະເພດອາຫານ ເຊິ່ງມັນເປັນສິນຄ້າກະທົບໄວຕໍ່ຊີວິດການເປັນຢູ່ ດັ່ງນັ້ນກ່ອນຈະສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນໄດ້ຕ້ອງໄດ້ຜ່ານການຢັ້ງຢືນຈາກ ອຢ ຫຼື ອາຫານສະອາດ ຈຶ່ງສາມາດຮັບຮອງໄດ້ ເຊິ່ງເຮັດໃຫ້ການສ້າງພົບຄວາມຫຍຸ້ງຍາກ ໃຊ້ເວລາດົນ ແລະ ເສຍຄ່າໃຊ້ຈ່າຍສູງ | • ພະແນກອຸດສາຫະກ□າ ແລະ ການຄ້າແຂວງ ເປັນໃຈກາງໃນການປະສານສົມທົບກັບຂະແໜງ ອຢ ຂອງແຂວງ ເພື່ອຈັດຕັ້ງປະຕິບັດຕາມລະບຽບການຂອງ ອຢ ວາງອອກ ຫຼື ຄວນຢັ້ງຢືນເປັນອາຫານສະອາດ ມີຂັ້ນຕອນໃດແດ່ ເພື່ອບໍ່ໃຫ້ແກ່ຍາວເວລາ ແລະ ເສຍຄ່າໃຊ້ຈ່າຍຕາມຄວາມເໝາະສົມ |

# ຂໍຂອບໃຈ!

# (THANK YOU!)